## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 15 ກໍຣະກົດ 2007 (15-1-2007)

---

## <u>ແບ່ງປັນເຣື່ອງຂອງພຣະຄຣິດກັບທຸກໆ ຄົນ</u>

<u>**ຂໍ້ພຣະຄັມພີໃນບົດຮຽນ:**</u> ( ກຈທ. 10: 24-29, 34-36,42-48 )

<u>**ພຣະຄັມພີແຫ່ງຄວາມຈິງ:**</u> ເພາະພຣະເຈົ້າໄດ້ຊົງປະທານຄວາມລອດພົ້ນເພື່ອຄົນທຸກຄົນ, ພວກເຮົາຈະແບ່ງປັນເຣື່ອງຂ່າວປະເສີດກັບທຸກໆ ຄົນແລະເຊີນຊວນໃຫ້ເຂົາມາຮັບເຊື່ອໃນອົງພຣະຄຣິດ.

<u>**ຄຳຖາມຊີວິດ:**</u> ຂ້າພະເຈົ້າຄວນຈະແບ່ງປັນພຣະຄຳເຣື່ອງຂອງພຣະຄຣິດກັບຜູ້ໃດແດ່?

<u>**ຜົນສະທ້ອນຕໍ່ຊີວິດ:**</u> ບົດຮຽນບົດນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍໃຫ້ທ່ານໃຫ້ເຮັດພາກສ່ວນຂອງທ່ານເພື່ອໃຫ້ໂບດເປັນໄປຕາມພຣະປະສົງຂອງພຣະເຈົ້າໂດຍ...

* ເຂົ້າໃຈສເມີວ່າເຣື່ອງການປະກາດຂ່າວປະເສີດນັ້ນແມ່ນເພື່ອຫມົດທຸກຄົນ.
* ຢ່າງອອກໄປຂ້າງນອກໃນເວລາທີ່ທ່ານພ້ອມທີ່ຈະແບ່ງປັນເຣື່ອງຂອງພຣະຄຣິສໃນຂະນະທີ່ພຣະເຈົ້າໄດ້ປະທານໂອກາດໃຫ້ແກ່ທ່ານ.

### ສຶກສາພຣະຄັມພີ

ນະວະນິຍາຍທີ່ໄດ້ຂາຍດີທີ່ສຸດເຣື່ອງ The Davinci Code ທີ່ໄດ້ສ້າງເປັນຫນັງແລະໄດ້ອອກສາຍໃນໂຮງພາບພະຍົນໃນເດືອນ 5 ປີ 2006. ໃນເຣື່ອງໄດ້ປະຕິເສດຄວາມຈິງຂອງພຣະເຢຊູແລະສ້າງຮູບພາບໃຫ້ພຣະອົງແຕ່ງງານກັບມາຣີອາໄທມັກດາລາແລະມີລູກນຳກັນຜູ້ນຶ່ງ. ຫນັງເຣື່ອງນີ້ໄດ້ອອກສາຍໄປທົ່ວທຸກໂຮງພາບພະຍົນໃນທົ່ວໂລກ, ມີຄົນຫລາຍລ້ານຄົນໄດ້ອ່ານປື້ມນິຍາຍເຣື່ອງນີ້ ຫລືໄດ້ຊົມພາບພະຍົນເຣື່ອງນີ້ທີ່ບໍ່ໄດ້ຮູ້ເຣື່ອງຄວາມຈິງກ່ຽວກັບພຣະເຢຊູ. ພວກເຂົາກໍເກີດຫລົງເຊື່ອຕາມເຣື່ອງທີ່ໄດ້ຖືກປັ້ນແຕ່ງຂຶ້ນ.

ບົດຮຽນບົດນີ້ຈະຊ່ວຍໃຫ້ພວກເຮົາໄດ້ເຂົ້າໃຈໃນສິ່ງສຳຄັນໃນການບອກຄວາມຈິງເຖິງເຣື່ອງຂອງພຣະເຢຊູຕໍ່ຄົນທີ່ຢູ່ຮອບຂ້າງພວກເຮົາ. ຖ້າພວກເຮົາບໍ່ຮີບແກ້ໄຂບອກຄວາມຈິງໃຫ້ພວກເຂົາຮູ້ກໍອາດຈະຍັງມີຄົນເປັນຈຳນວນຫລວງຫລາຍທີ່ຍັງຫລົງງົມງາຍເຊື່ອຕາມເຣື່ອງຣະບົບຜິດໆ ນັ້ນຢູ່.

1. <u>**ເອົາຊະນະຕໍ່ສິ່ງທີ່ກີດຂວາງ**</u> ( ກຈທ. 10: 24-29 )

ຫລັງຈາກທີ່ເປໂຕໄດ້ເຫັນນິມິດທີ່ພຣະເຈົ້າຊົງສະແດງໃຫ້ເຫັນເພື່ອເປັນການສອນເພິ່ນໃຫ້ຮູ້ວ່າທຸກສິ່ງນັ້ນບໍຣິສຸດແລ້ວ ( ກຈທ. 10: 9-16 ). ເປໂຕກໍໄດ້ເດີນທາງໄປບ້ານຂອງໂກເນລີໂອ, ໄທຄາລີເລຜູ້ທີ່ມີສິນທັມແລະຢຳເກງພຣະເຈົ້າ ( ຂໍ້ 22 ). ພຣະເຈົ້າໄດ້ສັ່ງໃຫ້ໂກເນລີໂອໃຫ້ສົ່ງຄົນໄປຫາເປໂຕ. ຊາຍທັງສອງນີ້ເຊື່ອຟັງແລະຕິດຕາມຄຳສັ່ງຂອງພຣະເຈົ້າ. ພວກເຮົາກໍສົມຄວນຈະເຮັດຢ່າງນັ້ນເຫມືອນກັນຄືປະຕິບັດຕາມທິດທາງທີ່ພຣະເຈົ້າໄດ້ບອກພວກເຮົາໄວ້ແລ້ວເຖິງແມ່ນວ່າມັນຈະເປັນການຝືນແລະຕໍ່ສູ້ກັບສິ່ງທີ່ພວກເຮົາເຄີຍຖືກສັ່ງສອນມາກ່ອນແຕ່ບູຮານແລ້ວກໍຕາມ.

ຕາມກົດຫມາຍຂອງພວກຢິວແລ້ວ, ເປໂຕກໍມີສິດທີ່ຈະບໍ່ຕົກລົງກັບຄຳເຊີນຂອງຜູ້ສົ່ງຂ່າວທີ່ມາຈາກບ້ານຂອງໂກເນລີໂອເພາະເປັນການຝ່າຝືນກົດຫມາຍທີ່ຄົນຢິວຈະເຂົ້າໄປໃນເຮືອນຂອງຄົນຕ່າງຊາດ. ພວກຄົນຢິວຈະຖືວ່າບໍ່ສະອາດ. ເຖິງຢ່າງໃດກໍຕາມ, ໃນເວລາດຽວກັນກັບຜູ້ສົ່ງຂ່າວໄດ້ເດີນທາງມາເຖິງບ່ອນທີ່ເປໂຕພັກເຊົາຢູ່ຫລັງຈາກທີ່

ພຣະເຈົ້າໄດ້ສອນເພິ່ນໃຫ້ຮູ້ວ່າຜິດໃນເຣື່ອງການຕັດສິນຜູ້ອື່ນວ່າບໍ່ສະອາດ. ໃນທຳນອງດຽວກັນ, ໂກເນລີໂອກໍອາດຈະມີຄວາມຢ້ານກົວໃນການທີ່ຈະເຊື້ອເຊີນເປໂຕທີ່ເປັນຄົນຢິວໃຫ້ເຂົ້າມາໃນບ້ານ. ແຕ່ທີ່ແທ້ຈິງແລ້ວຄົນຕ່າງຊາດຜູ້ນຶ່ງໄດ້ຖືກສົ່ງມາຫາຄົນຢິວອີກຜູ້ນຶ່ງ, ແລະຄົນຢິວຜູ້ນີ້ກໍມີຄວາມຍິນດີທີ່ຈະເຂົ້າມາໃນບ້ານຂອງລາວ, ມັນເປັນຕົວຢ່າງຂອງຄົນສອງຄົນທີ່ຕ່າງກໍ່ເຊື່ອແລະປະຕິບັດຕາມພຣະເຈົ້າຜູ້ທີ່ຊົງຮັກຄົນທັງໂລກ.

ເປໂຕຮູ້ດີວ່າຄວນເຊື່ອຟັງພຣະເຈົ້າແທນມະນຸດ ( 5: 29 ). ພຣະເຢຊູເອງ, ໃນສມັຍແລກທີ່ພຣະອົງອອກໄປປະກາດ, ໄດ້ຊົງສັ່ງສອນໃຫ້ແກ່ຄົນທີ່ມີປະເພນີ, ຊາດ ພາສາ, ຫລືສຸຂພາບ ທີ່ແຕກຕ່າງກັນ. ພຣະເຈົ້າໄດ້ຊົງເອີ້ນເອົາທຸກໆ ຄົນໃຫ້ນະມັສການພຣະອົງເຫມືອນກັນ. ຫລັງຈາກທີ່ເປໂຕເກີດຄວາມເຂົ້າໃຈໃນເຣື່ອງຄົນຢິວວ່າບໍ່ໄດ້ມີສິ່ງໃດທີ່ຈະເປັນສາຍເຫດຫວງຫ້າມກັບຄົນຕ່າງຊາດ, ໂດຍຕອບວ່າ " **ແຕ່ພຣະເຈົ້າໄດ້ຊົງສຳແດງແກ່ຂ້າພະເຈົ້າແລ້ວວ່າບໍ່ຄວນເອີ້ນຄົນໃດຄົນນຶ່ງວ່າເປັນທີ່ຫ້າມຫລືບໍ່ສະອາດ.** "

ພຣະເຈົ້າຊົງສຳແດງພຣະປະສົງທີ່ແທ້ຈິງໃຫ້ແກ່ຜູ້ທີ່ຕິດຕາມພຣະອົງ. ຄວາມຈິງນັ້ນກໍຄື, ພວກເຮົາຈະຍອມຮັບແລ້ວພວກເຮົາກໍຈະຮຽນເອົາແບບຢ່າງທີ່ເປໂຕເຮັດກໍຄືໄດ້ພົບປະກັບຄົນທີ່ຖືກຖືວ່າເປັນຄົນບໍ່ສະອາດ; ທີ່ມີຄວາມຫມາຍວ່າເປັນຄົນຜິດບາບ.

ພຣະເຈົ້າໄດ້ຊົງສະແດງໃຫ້ຜູ້ທີ່ຕິດຕາມພຣະອົງໄດ້ເປັນຄວາມຈິງແທ້. ເຫດຜົນທີ່ແທ້ຈິງແມ້ວ່າເຮົາຈະຍອມຮັບຖ້າພວກເຮົາຍອມເຮັດ, ກໍແມ່ນເອົາພື້ນຖານຕາມຢ່າງຂອງເປໂຕ. ຄືເພິ່ນໄດ້ຄົບກັບຄົນທີ່ຖືກຖືວ່າເປັນຄົນບໍ່ສະອາດ. ມີແຕ່ພຣະເຈົ້າອົງດຽວທີ່ມີສິດອຳນາດທີ່ຊອບທັມທີ່ຈະເອີ້ນຜູ້ໃດຜູ້ນຶ່ງວ່າມີມົນທິນໄດ້; ພຣະອົງຊົງເຫັນພວກເຮົາຜູ້ທີ່ເປັນຄົນບາບ. ຍ້ອນຄວາມບາບທີ່ເຊື່ອງເຮົາໄວ້ເປັນເຫດໃຫ້ພວກເຮົາຫ່າງໄກອອກຈາກພຣະເຈົ້າໄປ. ເພາະຄວາມບາບຂອງພວກເຮົາທີ່ເປັນສາເຫດໃຫ້ພຣະບຸດຂອງພຣະອົງຕ້ອງຕາຍ ( 1 ປຕ. 2:24 ). ຈິດວິນຍານຂອງພວກເຮົາສົມຄວນຈະຮັບໂທດເຖິງຕາຍຍ້ອນຄວາມຜິດບາຍຂອງຕົວເອງ ( ໂຣມ. 3:23 ). ຖ້າພຣະເຈົ້າສາມາດທີ່ຈະຮັກເຮົາຜູ້ເປັນຄົນບາບໄດ້, ເປັນຫຍັງພວກເຮົາຈຶ່ງຕັດສິນຄົນໃດຄົນນຶ່ງວ່າເປັນຄົນທັມມະດາຫລືຄົນມີມົນທິນ? ຈະບໍ່ມີກຳແພງໃດໆ ມາກີດກັ້ນພວກເຮົາບໍ່ໃຫ້ປະກາດແບ່ງປັນຂ່າວປະເສີດດ້ວຍຄວາມຫວັງແລະມີຊັຍຊະນະ, ບັນລຸຈຸດມຸ້ງຫມາຍແລະຊີວິດອັນຕລອດໄປເປັນນິດ, ແລະທັງຫມົດນີ້ກໍຈະພົບໃນພຣະເຢຊູພຽງຜູ້ດຽວເທົ່ານັ້ນ.

## 2. <u>ປ່າວປະກາດພຣະທັມຂອງພຣະເຈົ້າ</u> ( ກຈກ. 10:34-36, 42-43 )

ຜູ້ໃດແດ່ທີ່ເຫມາະສົມທີ່ພຣະເຈົ້າຈະຍອມຮັບເອົາ? ໃນລະຫວ່າງການອອກໄປປະກາດທີ່ອັຟຣິກາ, ມີຜູ້ນຶ່ງໃນກຸ່ມຂອງເດັກນ້ອຍຖາມຂຶ້ນວ່າ " ມີຜູ້ໃດບໍ່ຕ້ອງການໄປສວັນ? ເດັກນ້ອຍຜູ້ນຶ່ງຍົກມືຂຶ້ນເພາະລາວຄິດວ່າມີຄຳຕອບທີ່ຖືກຕ້ອງແລ້ວ. ເມື່ອຖືກເອີ້ນໃຫ້ຕອບຄຳຖາມ " ຜູ້ຊາຍຄົນຂາວ ". ອາຍຸຂນາດເດັກນ້ອຍຜູ້ນີ້ຄວາມຄິດຂອງລາວຄືດວ່າມີກຸ່ມຄົນຈຳພວກນຶ່ງເທົ່ານັ້ນທີ່ພຣະເຈົ້າພໍພຣະທັຍຫລາຍກວ່າພວກອື່ນໆ . ໃນການພົບປະຮັປທານອາຫານທ່ຽງຂອງກຸ່ມອາຈານໃນລະຍະໄກ້ໆ ທີ່ຜ່ານມານີ້. ມີອາຈານຜູ້ນຶ່ງເລົ່າເຣື່ອງແບ່ງປັນໃຫ້ຟັງວ່າເພິ່ນໄດ້ພົບຊາຍຜູ້ນຶ່ງທີ່ມີຄວາມເຊື່ອວ່າຍັງມີບາງຊົນຊາດໃນບາງຊົນເຜົ່າບໍ່ມີຈິດວິນຍານ. ແນ່ນອນ, ຊາຍຜູ້ນີ້ບໍ່ໄດ້ຢູ່ໃນກຸ່ມຊົນໃນເຜົ່ານັ້ນ.

ແມ່ນຫຍັງທີ່ເປັນປັດໃຈສຳຄັນເຖິງເຫດຜົນໃນການແບ່ງປັນວ່າ **ພຣະເຈົ້າບໍ່ໄດ້ມີຄວາມລຳອຽງ** ຮັກກຸ່ມຊົນຊາດຊົນເຜົ່າໃດນຶ່ງເປັນພິເສດແຕ່ເທົ່າທຽມກັນຫມົດທຸກຄົນ. ຄັ້ງນຶ່ງ, ເປໂຕກໍມີຄວາມຄິດແບບນັ້ນຄືກັນວ່າມີພຽງຄົນຢິວເທົ່ານັ້ນທີ່ໄດ້ຮັບຄວາມລອດພົ້ນ. ພຣະເຈົ້າໄດ້ທຳພາຣະກິດຂອງພຣະອົງກັບເປໂຕແລະດຽວນີ້ເພິ່ນກໍໄດ້ແບ່ງປັນກັບເພື່ອນໃຫມ່ທີ່ເປັນຄົນຕ່າງຊາດວ່າ ທຸກໆ ຄົນທີ່ເຊື່ອຖືໃນພຣະອົງນັ້ນ ພຣະເຈົ້າຈະຊົງຍົກຄວາມຜິດບາບຂອງເຂົາ. ເມື່ອພວກເຮົາໄປເຖິງສວັນ, ພວກເຮົາກໍຈະພົບພີ່ນ້ອງທັງຫລາຍ " ຈາກທຸກຊາດ, ທຸກເຜົ່າ, ທຸກ ຄົນແລະທຸກພາສາ " ( ພນມ. 7:9 ).

ພວກນັກປາດແຕ່ລະຄົນກໍມີວິທີທາງຂອງໃຜລາວໃນການແບ່ງປັນໃນທາງທີ່ຄົນອື່ນໆ ຈະໄດ້ເຂົ້າໃຈ. ວິທີທີ່ພວກເຮົາໃຊ້ກັນໃນປັດຈຸບັນອາດຈະມີຄວາມແຕກຕ່າງແຕ່ກໍຈະໄປເຖິງຈຸດຫມາຍອັນດຽວກັນ. ມີພຽງພຣະເຢຊູຜູ້ດຽວເທົ່ານັ້ນກ່າວຄຳນີ້ " ເຮົາເປັນທາງນັ້ນ, ເປັນຄວາມຈິງແລະເປັນຊີວິດ, ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ "

( ຢຮ. 14: 6 ). ພຣະເຈົ້າຊົງຮັກແລະຊົງປະທານອະພັຍໃນຄວາມຜິດບາບໃຫ້ແກ່ໄພ່ພົນຂອງພຣະອົງ. ແລະຜູ້ທີ່ໄດ້ຮັບສິດທິນັ້ນກໍຄືພຣະເຢຊູ. ການທີ່ໄດ້ຮັບການຊົງນຳຈາກພຣະອົງກໍຖືວ່າເປັນຄວາມຊົມຊື່ນຍິນດີ, ໂຢຮັນບັບຕິສໂຕໄດ້ອະທິບາຍໃຫ້ເຫັນແຈ້ງແລ້ວໃນສິ່ງທີ່ໄດ້ເຫັນໃນອົງພຣະເຢຊູ, " ຈົ່ງເບິ່ງພຣະເມສານ້ອຍຂອງພຣະເຈົ້າຜູ້ຊົງຮັບຄວາມຜິດບາບຂອງໂລກໄປເສັຍ!" ( 1 ຢຮ. 1: 29 ). ຄວາມຈິງອີກຢ່າງນຶ່ງທີ່ພວກເຮົາຈະໄດ້ຮັບໄດ້ກໍຄືຄວາມສຸກໂດຍຜ່ານທາງພຣະເຢຊູຄຣິດແລະເປັນພຣະອົງເຈົ້າຂອງເຮົາທັງຫລາຍ, ແລະຈິງແທ້ແລ້ວກໍແມ່ນຂ່າວປະເສີດນັ້ນເອງ. ພວກເຮົາຈະສາມາດແບ່ງປັນຂ່າວປະເສີດນີ້ບໍ່ພຽງແຕ່ໃຫ້ແກ່ເພື່ອນບ້ານໃກ້ຄຽງເທົ່ານັ້ນ ແຕ່ອ້ອມຮອບໄປທົ່ວໂລກເພາະພຣະເຢຊູມາເພື່ອທຸກຄົນ.

ທ່ານເຄີຍໄດ້ຮ້ອງຫາພຣະເຢຊູຄືຂໍພຣະອົງຊົງຍົກໂທດໃຫ້ໃນຄວາມຜິດບາບຂອງທ່ານແລະຂໍໃຫ້ພຣະອົງເປັນພຣະຜູ້ເປັນເຈົ້າອົງດຽວໃນຊີວິດຂອງທ່ານຈັກເທື່ອບໍ່? ຖ້າຍັງບໍ່ທັນໄດ້; ເປັນຍັງທ່ານຈຶ່ງບໍ່ຮັບດຽວນີ້ເລີຍ? ຖ້າພຣະເຢຊູເປັນພຣະຜູ້ເປັນເຈົ້າຂອງທ່ານ, ຈາກນັ້ນທ່ານຈະແບ່ງປັນຂ່າວປະເສີດໃນເຣື່ອງທີ່ພຣະເຢຊູໄດ້ປ່ຽນແປງຊີວິດຂອງທ່ານແນວໃດແດ່? ຈົ່ງບອກໃຫ້ຄົນອື່ນໄດ້ຮູ້ແລະຈະໄດ້ມີສ່ວນຮ່ວມກັບຄວາມຊົມຊື່ນຍິນດີຄືກັນ.

### 3. <u>ຍອມຮັບທຸກຄົນຜູ້ທີ່ຮັບເອົາພຣະຄຣິດ</u> ( ກຈກ. 10: 44-48 )

ພວກຕ່າງຊາດຍອມຮັບເອົາຂ່າວປະເສີດເພາະວ່າພຣະວິນຍານບໍຣິສຸດສະຖິດຢູ່ເທິງເຂົາ-ກ່ອນທີ່ພວກເຂົາຈະຮັບສິນບັບຕິສມາ. ພຣະວິນຍານບໍຣິສຸດເປັນຜູ້ທີ່ເຮັດໃຫ້ພວກເຮົາຮູ້ຈັກຂ່າວປະເສີດວ່າເປັນຄວາມຈິງ, ເຮັດໃຫ້ເຮົາໄດ້ເຫັນຄວາມຜິດບາບຂອງຕົວເອງ. ເວລາທີ່ເຮົາຮັບເອົາພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນແລ້ວ, ພຣະອົງກໍຈະມາສະຖິດຢູ່ນຳເມື່ອເຮົາໄດ້ສາລະພາບຄວາມຜິດບາບແລະຮ້ອງຂໍ, ພຣະອົງກໍຈະສະເດັດມາ.

ເປໂຕບໍ່ໄດ້ເຫັນວ່າຜູ້ທີ່ເຊື່ອໃໝ່ບໍ່ສົມຄວນຮັບບັບຕິສມາ. ເພາະການບັບຕິສະມາບໍ່ໄດ້ເພີ້ມເຕີມຫລືຕັດສິ່ງໃດອອກຈາກການໄດ້ຮັບຄວາມລອດພົ້ນ, ແຕ່ໄດ້ພິສູດໃຫ້ເຫັນເຖິງສິ່ງທີ່ໄດ້ເກີດຂຶ້ນກັບພວກເຮົາ. ບັບຕິສະມາບໍ່ໄດ້ຊ່ວຍໃຫ້ພົ້ນຫລືລົບລ້າງຄວາມບາບ, ແຕ່ເປັນເຄື່ອງພິສູດໃຫ້ເຫັນເຖິງການເຊື່ອຟັງ ( ມທ 28: 18-20 ). ຜູ້ທີ່ມີຄວາມເຊື່ອທີ່ແທ້ຈິງແລ້ວກໍສົມຄວນທີ່ຈະຮັບບັບຕິສະມາ.

ຜູ້ທີ່ໃຫຍ່ແລ້ວໃນຄວາມເຊື່ອໃນປັດຈຸບັນນີ້ຕ້ອງການທີ່ຈະສະແດງໃຫ້ປວງຊົນໄດ້ເຫັນໃນສິ່ງທີ່ພຣະຄຣິດໄດ້ເຮັດເພື່ອເຂົາໄດ້ຊົງບັບຕິສະມາ. ການບັບຕິສະມາສະແດງອອກເຖິງສັນຍາລັກອັນດີງາມຄືຊີວິດຂອງເຮົາໄດ້ຕາຍລົງໄປແລ້ວກັບຄວາມບາບ. ແລະດຽວນີ້, ໃຕ້ການຊົງນຳຂອງພຣະເຢຊູ, ຜູ້ຊົງໄດ້ຟື້ນຄືນພຣະຊົນມາສູ່ຊີວິດໃໝ່ແລ້ວ. ກໍຄືພາບອັນສວຍງາມທີ່ໄດ້ສະແດງເຖິງການສິ້ນພຣະຊົນ, ການຖືກຝັງໄວ້ແລະການຟື້ນຄືນພຣະຊົນຂອງພຣະອົງ ( ໂຣມ 6: 1-11 ). ເປໂຕພ້ອມກັບເພື່ອນຮ່ວມງານທີ່ເປັນຄົນຢິວກໍໄດ້ເຫັນສິ່ງອັສຈັນຄືພຣະເຈົ້າໄດ້ເຮັດສິ່ງດຽວກັນຕໍ່ຄົນຕ່າງຊາດເຫມືອນກັນ ແລະກໍເປັນສິ່ງທີ່ເຕືອນໃຈໃຫ້ພວກເຂົາໄດ້ຄິດເຖິງເຫດການໃນວັນເພັນຕາຄອສ ( ກຈກ 2:4 ). ແລະນີ້ແຫລະທີ່ຜູ້ເຊື່ອຈຳນວນນຶ່ງໄດ້ຂໍໃຫ້ເປໂຕຢູ່ຕໍ່ອີກຈັກສອງສາມວັນ. ເພາະຜູ້ທີ່ມີຄວາມເຊື່ອແທ້ແມ່ນມີຄວາມກະຫາຍທີ່ຈະໄດ້ຍິນແລະຮຽນເພີ້ມເຕີມຂຶ້ນຢູ່ສເມີ.

ມີຄົນບາງກຸ່ມທີ່ເຂົ້າໃຈຜິດທີ່ຄິດວ່າເມື່ອພວກເຂົາໄດ້ຮັບຄວາມລອດພົ້ນແລະຮັບບັບຕິສະມາແລ້ວ, ກໍແມ່ນໄດ້ເຮັດທຸກສິ່ງຢ່າງສົມບູນແບບຂອງຊີວິດຄຣິສຕຽນແລ້ວ, ສຸດທ້າຍແລ້ວແລະບໍ່ແມ່ນເລີ້ມຕົ້ນອີກ!

ຄວາມຈະເຣີນເຕີບໂຕໃນພຣະເຢຊູໄດ້ຊ່ວຍໃຫ້ພວກເຮົາມີອິສລະຈາກອຳນາດຂອງຄວາມບາບ. ພຣະເຈົ້າມີພຣະປະສົງໃຫ້ພວກເຮົາກາຍເປັນສາວົກແລະສ້າງສາວົກຕໍ່ໆ ໄປ( ມທ. 28-20 ). ຜູ້ທີ່ເຊື່ອໃໝ່ມີຄວາມຈຳເປັນທີ່ຈະຕ້ອງຮຽນເພີ້ມແລະສຳຄັນຄືການອະທິຖານອ້ອນວອນ, ອ່ານພຣະຄັມພີ, ແລະການທຳງານຂອງພຣະວິນຍານບໍຣິສຸດຢູ່ໃນຕົວຂອງພວກເຂົາແລະຢູ່ໃນໂບດດ້ວຍ.

ເປໂຕໄດ້ໃຊ້ເວລາກັບພວກທີ່ເຊື່ອໃນສມັຍຕົ້ນ. ຈຸດອ່ອນຂອງຫລາຍໆ ໂບດຄືການຂາດການອົບຮົມສັ່ງສອນແກ່ຜູ້ທີ່ເຊື່ອໃໝ່. ພວກເຮົາຄວນໃຊ້ເວລາສັ່ງສອນເຂົາໃນເພື່ອການສ້າງສາວົກ. ໃນຕອນສຸດທ້າຍຂອງພຣະທັມ ກຈກ. 10, ເປໂຕບໍ່ໄດ້ເຫັນຄົນພວກນີ້ເປັນຄົນຕ່າງຊາດອີກຕໍ່ໄປ, ແຕ່ເປັນຜູ້ທີ່ຕິດຕາມໃນພຣະຄຣິສເຫມືອນກັນ. ພວກເຮົາກໍ່

ຄວນຈະຍອມຮັບເອົາໝົດທຸກຄົນທີ່ຮັບເອົາພຣະຄຣິດແລ້ວ.

## ບົດຮຽນຊີວິດ

ຂ່າວປະເສີດຂອງອົງພຣະເຢຊູຄຣິສແມ່ນສຳຫລັບໝົດທຸກຄົນ, ເພາະທຸກຄົນກໍແມ່ນຕ້ອງການຄວາມລອດພົ້ນເໝືອນກັນ. ພວກເຮົາດຳຣົງຊີວິດຢູ່ທ່າມກາງຄົນຈຳນວນຫລາຍພວກທີ່ມີແນວຄິດແຕກຕ່າງກັນໃນເຣື່ອງຄວາມຈິງ. ພວກເຮົາສົມຄວນທີ່ຈະເປັນຜູ້ທີ່ແບ່ງປັນຄືຄວາມລອດພົ້ນນັ້ນມີຢູ່ໃນພຣະເຢຊູຄຣິດ ຜູ້ຊົງຍອມສິ້ນພຣະຊົນເພື່ອຄວາມບາບຂອງພວກເຮົາທຸກຄົນແລະພຣະອົງກໍໄດ້ຊົງຟື້ນຄືນພຣະຊົນມາແລ້ວຈາກຄວາມຕາຍ.

ພວກເຮົາຄວນຈະຕອບສນອງກັບການຮຽນພຣະຄຳພີນີ້ແນວໃດ?

* ໃນຂະນະທີ່ພວກເຮົາແບ່ງປັນຢູ່, ພວກເຮົາຄວນຈະເຂົ້າໃຈວ່າຂ່າວປະເສີດມີໄວ້ສຳຫລັບທຸກຄົນ.
* ພວກເຮົາບໍ່ສົມຄວນທີ່ຈະໃຫ້ຄວາມຄິດກີດກັນຂອງຄົນອື່ນມາເປັນສາເຫດໃຫ້ເຮົາບໍ່ຢາກແບ່ງປັນເຣື່ອງຂ່າວປະເສີດທີ່ມີໄຊຊະນະທີ່ມີໃນພຣະເຢຊູ.
* ຫລັງຈາກທີ່ພວກເຂົາມີການຕອບສນອງແລ້ວ, ພວກເຮົາກໍສົມຄວນຍອມຮັບພວກເຂົາແລະໃຫ້ເຂົາເປັນສາວົກ.

( ອຸປຖັມໂດຍ ລາວຊາວເທີນແບັບຕິສສັມພັນ www.lsbf.org - ແປແລະຮຽບຮຽງໂດຍ ອຣ )